[Logo] Glencoe Regional Health

## ສະຫຼຸບນະໂຍບາຍວ່າດ້ວຍຄວາມຊ່ວຍເຫຼືອດ້ານການເງິນເປັນພາສາທີ່ເຂົ້າໃຈງ່າຍ

Glencoe Regional Health (GRH) ສະເຫນີນະໂຍບາຍວ່າດ້ວຍຄວາມຊ່ວຍເຫຼືອດ້ານການເງິນແກ່ຄົນເຈັບທີ່ມີຄຸນສົມບັດຕາມເກນໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອ. ໃນປັດຈຸບັນມີການສະເໜີໂຄງການໃຫ້ສ່ວນຫຼຸດສອງໂຄງການທີ່ແຍກຕ່າງຫາກຈາກກັນ. ຖ້າຜູ້ຄໍ້າປະກັນ/ຄົນເຈັບມີຄຸນສົມບັດຕາມເກນສໍາລັບໂຄງການໃດໜຶ່ງ ຈະມີການໃຊ້ສ່ວນຫຼຸດນັ້ນຕະຫຼອດປີປະຕິທິນ.

ສາມາດນໍາໃຊ້ການດູແລຮັກສາທີ່ບໍ່ມີປະກັນ (Uninsured Care) ທີ່ເອີ້ນອີກຢ່າງໜຶ່ງວ່າສ່ວນຫຼຸດຂອງໄອຍະການສູງສຸດ ຫຼື ສ່ວນຫຼຸດຕາມລັດຖະບັນຍັດຂອງລັດໄດ້ ຖ້າຜູ້ຄໍ້າປະກັນ/ຄົນເຈັບມີຄຸນສົມບັດຕາມເກນເນື່ອງຈາກລາຍໄດ້ປະຈໍາປີຂອງຄອບຄົວຂອງເຂົາເຈົ້າແມ່ນຕໍ່າກວ່າ 125,000.00 ໂດລາ ແລະເຂົາເຈົ້າບໍ່ມີປະກັນປະເພດໃດຄຸ້ມຄອງເລີຍ. ສ່ວນຫຼຸດທີ່ນໍາໃຊ້ຈະເປັນ 41% ຂອງຄ່າໃຊ້ຈ່າຍລວມທີ່ຮຽກເກັບ ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1/1/2024.

GRH ສະເໜີສ່ວນຫຼຸດໃນການດູແລຮັກສາທີ່ບໍ່ຕ້ອງຊົດໃຊ້ຄືນໃຫ້ໂຮງໝໍ ຫຼື ຜູ້ໃຫ້ບໍລິການ (Uncompensated Care) ອີງຕາມລາຍໄດ້ຂອງບຸຄຄົນ. ມີການສະເໜີການດູແລຮັກສາຟຣີໃຫ້ກັບຜູ້ຄໍ້າປະກັນ/ຄົນເຈັບ ຖ້າລາຍໄດ້ຂອງເຂົາເຈົ້າຫນ້ອຍກວ່າສອງເທົ່າຂອງລະດັບຄວາມຍາກຈົນຂອງລັດຖະບານກາງ. ຖ້າລາຍໄດ້ຂອງເຂົາເຈົ້າຢູ່ລະຫວ່າງສອງເທົ່າເຖິງສີ່ເທົ່າຂອງລະດັບຄວາມຍາກຈົນຂອງລັດຖະບານກາງ ຈະໃຫ້ການດູແລຮັກສາພ້ອມສ່ວນຫຼຸດ 50%. ຜູ້ຄໍ້າປະກັນ/ຄົນເຈັບຈະໄດ້ຮັບການພິຈາລະນາສໍາລັບການດູແລຮັກສາທີ່ບໍ່ຕ້ອງຈ່າຍເງິນຄືນຖ້າເຂົາເຈົ້າຍື່ນໃບສະໝັກທີ່ກອກ ຄົບຖ້ວນ, ຫນ້າທີຫນຶ່ງຂອງແບບຟອມ IRS 1040 ຈາກລາຍງານເສຍພາສີອີນຄໍາແທັກໃນປີທີ່ຜ່ານມາຂອງເຂົາເຈົ້າ ແລະຫຼັກຖານຢັ້ງຢືນການສະຫມັກແລະຄໍາປະຕິເສດຄວາມຊ່ວຍເຫຼືອດ້ານການແພດ. ຈະບໍ່ຮຽກເກັບຄ່າໃຊ້ຈ່າຍຈາກຜູ້ຄໍ້າປະກັນ/ຄົນເຈັບທີ່ມີຄຸນສົມບັດ ຕາມເກນການດູແລຮັກສາທີ່ບໍ່ຕ້ອງຊົດໃຊ້ຄືນຫຼາຍກວ່າຈໍານວນທີ່ຮຽກເກັບ ໂດຍທົ່ວໄປສໍາລັບບໍລິການສຸກເສີນ ແລະບໍລິການອື່ນໆທາງການແພດທີ່ຈໍາເປັນ.

ສາມາດເບິ່ງສໍາເນົານະໂຍບາຍວ່າດ້ວນຄວາມຊ່ວຍເຫຼືອດ້ານການເງິນຂອງ GRH ແລະໃບສະຫມັກໄດ້ໃນເວັບໄຊຂອງພວກເຮົາທີ່ [www.grhsonline.org/patients-visitors/billing-financial-assistance](http://www.grhsonline.org/patients-visitors/billing-financial-assistance), ທີ່ຫ້ອງການສັງຄົມສົງເຄາະຂອງ McLeod ເຄົາຕີ້ (McLeod County Social Services) ຫຼື ທີ່ໂຕະພະແນກຕ້ອນຮັບຂອງ GRH ທັງຢູ່ໃນໂຮງໝໍ ແລະຄລີນິກທີ່ 1805 Hennepin Avenue North, Glencoe, MN 55336. ເມື່ອເວົ້າລົມກັບເຈົ້າໜ້າທີ່ກ່ຽວກັບບັນຊີຂອງເຂົາເຈົ້າ ຜູ້ຄໍ້າປະກັນ/ຄົນເຈັບສາມາດຮ້ອງຂໍໃຫ້ສົ່ງນະໂຍບາຍວ່າດ້ວຍຄວາມຊ່ວຍເຫຼືອດ້ານການເງິນ ແລະ/ຫຼື ໃບສະຫມັກໃຫ້ເຂົາເຈົ້າທາງໄປສະນີໂດຍບໍ່ເສຍຄ່າໃຊ້ຈ່າຍ. ຖ້າຄົນເຈັບມີຄໍາຖາມກ່ຽວກັບສ່ວນຫຼຸດເຫຼົ່ານີ້ ຫຼື ໃນຂະນະ

ທີ່ກຳລັງກອກໃບສະໝັກ ເຂົາເຈົ້າສາມາດໂທຫາເຈົ້າໜ້າທີ່ຕົວແທນດ້ານການເງິນໄດ້ທີ່ເບີ 320-864-7101 ຫຼືໄປຕາມທີ່ຢູ່ຂ້າງເທິງເພື່ອຂໍຄວາມຊ່ວຍເຫຼືອ.

ແກ້ໄຂປັບປຸງວັນທີ 1/8/2024